# My Choice ແມ່ນໃຜ?

## ພາລະກິດຂອງພວກເຮົາ

ພວກເຮົາມຸ່ງໝັ້ນທີ່ຈະປັບປຸງສຸຂະພາບຂອງສະມາຊິກພວກເຮົາ ແລະ ເຮັດໃຫ້ຊຸມຊົນຂອງພວກເຮົາດີຂຶ້ນ. ໃນຖານະທີ່ເປັນຜູ້ເບິ່ງແຍງດູແລກອງທຶນທີ່ເຊື່ອຖືໄດ້, ພວກເຮົາເບິ່ງແຍງດູແລແຕ່ລະບຸກຄົນຢ່າງຄົບຖ້ວນ ແລະ ຄວາມເປັນຢູ່ທີ່ດີຂອງພວກເຂົາທັງໝົດ ໂດຍການໃຫ້ບໍລິການທີ່ສົ່ງເສີມຄວາມມີອິດສະຫຼະພາບ, ເຫັນຄຸນຄ່າຂອງຄວາມຫຼາກຫຼາຍ ແລະ ສ້າງແຮງບັນດານໃຈໃນການສະໜັບສະໜູນຕົນເອງ.







# ຕິດຕໍ່ພວກເຮົາ

## ພວກເຮົາພ້ອມທີ່ຈະຊ່ວຍເຫຼືອທ່ານ!

ໂທຫາພວກເຮົາ ຫຼື ເຂົ້າເບິ່ງເວັບໄຊທ໌ຂອງພວກເຮົາມື້ນີ້ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບໂປຣແກຣມ Medicare Dual Advantage.

**ເຂົ້າເບິ່ງ**
mychoicewi.org/medicare-dual-advantage/

**ໂທແບບບໍ່ເສຍຄ່າ**
800-963-0035
TTY: 711

**ເພື່ອຊອກຫາຫ້ອງການຂອງພວກເຮົາ, ກະລຸນາເຂົ້າເບິ່ງ:**
mychoicewi.org/medicare-dual-advantage/program-locations/

*My Choice Wisconsin Health Plan, Inc. ເປັນໄປຕາມກົດໝາຍສິດຂອງພົນລະເມືອງຂອງລັດຖະບານກາງທີ່ບັງຄັບໃຊ້ ແລະ ບໍ່ໄດ້ແບ່ງແຍກເຊື້ອຊາດ, ສີຜິວ, ຊາດກຳເນີດ, ອາຍຸ, ຄວາມພິການ ຫຼື ເພດ.*

*ATENCIÓN: Si habla español, tiene a su disposición servicios gratuitos de asistencia lingüística. Llame al 800-963-0035 (TTY: 711).*

*LUS CEEV: Yog tias koj hais lus Hmoob, cov kev pab txog lus, muaj kev pab dawb rau koj. Hu rau 1-800-963-0035 (TTY: 711).*

*H5209_4DABroch2024_M*
*ໄຟລ໌ ແລະ ການນຳໃຊ້ 10/10/2023*

my choice WISCONSIN

# Medicare Dual Advantage



**Medicare Dual Advantage ຊ່ວຍໃຫ້ສະມາຊິກໄດ້ຮັບຄວາມຊ່ວຍເຫຼືອເພີ່ມເຕີມທີ່ພວກເຂົາຕ້ອງການເພື່ອໃຫ້ມີສຸຂະພາບທີ່ແຂງແຮງ ແລະ ປອດໄພ.**

*ການເບິ່ງແຍງດູແລເລີ່ມຕົ້ນຈາກທີ່ນີ້.*

# Medicare Dual Advantage ແມ່ນຫຍັງ?

Medicare Dual Advantage (HMO SNP) ແມ່ນແຜນປະກັນ Medicare Advantage ສຳລັບຄົນທີ່ມີສິດໃນທັງ Medicaid ແລະ Medicare. ແຜນນີ້ຊ່ວຍປະສານງານດ້ານຄວາມຕ້ອງການເບິ່ງແຍງດູແລສຸຂະພາບຂອງທ່ານໂດຍບໍ່ເສຍຄ່າເບ້ຍປະກັນປະຈຳເດືອນ ຫຼື ຫັກຄ່າໃຊ້ຈ່າຍຕ່າງໆ. ແຜນຂອງທ່ານລວມມີຢາປິ່ນປົວຕາມແພດສັ່ງ ແລະ ທ່ານຈະສາມາດເຂົ້າເຖິງໂຄງການຜົນປະໂຫຍດສະເພາະເຊັ່ນ: ການປິ່ນປົວແຂ້ວ ແລະ ສາຍຕາ ແລະ ເງິນຊ່ວຍເຫຼືອລາຍເດືອນເພື່ອໃຊ້ຈ່າຍໃນການຊື້ຢາທີ່ສາມາດຊື້ໄດ້ຕາມຮ້ານ.

# ພວກເຮົາເຮັດຫຍັງ?

My Choice Wisconsin ເປັນອົງການຈັດຕັ້ງທີ່ມີການຈັດການດູແລທີ່ມີຄວາມມຸ່ງໝັ້ນທີ່ຈະຍົກສະມາຊິກຂອງເຮົາມາເປັນອັນດັບໜຶ່ງສະເໝີ. ພ້ອມກັບໂຄງການທັງຫ້າຂອງ ທົ່ວລັດ Wisconsin, ສະມາຊິກຈະໄດ້ຮັບການບໍລິການປິ່ນປົວ ແລະ ຮັກສາສຸຂະພາບແບບຍາວນານ ເພື່ອຊ່ວຍໃຫ້ເຂົາເຈົ້າມີຊີວິດຢູ່ໃນຊີວິດທີ່ດີທີ່ສຸດພາຍໃນຊຸມຊົນຂອງເຂົາເຈົ້າເອງ. My Choice Wisconsin ໃຫ້ຕົວເລືອກດັ່ງນີ້: ການດູແລຄອບຄົວ, ຜູ້ຮ່ວມການດູແລຄອບຄົວ, Medicare Dual Advantage, Medicaid SSI ແລະ BadgerCare Plus.

My Choice Wisconsin ເຮັດວຽກຮ່ວມກັນກັບອົງກອນທ້ອງຖິ່ນ ແລະ ຜູ້ໃຫ້ການເບິ່ງແຍງດູແລສຸຂະພາບເພື່ອໃຫ້ແນ່ໃຈວ່າສະມາຊິກຂອງພວກເຮົາມີຫຼາຍທາງເລືອກ ແລະ ການຊ່ວຍເຫຼືອ ແລະ ການບໍລິການທີ່ມີຄຸນນະພາບສູງຈາກເຄືອຂ່າຍຫຼາກຫຼາຍ.



# ການປະສານງານການເບິ່ງແຍງດູແລແມ່ນຫຍັງ?

**ຜູ້ປະສານງານເບິ່ງແຍງດູແລຂອງພວກເຮົາຈະຊ່ວຍທ່ານຈັດການກັບຄວາມຕ້ອງການດ້ານການແພດ, ພ້ອມກັນກັບເຊື່ອມຕໍ່ທ່ານກັບບໍລິການຊຸມຊົນ ແລະ ສັງຄົມ.**



**ທ່ານ, ສະມາຊິກ**



**ຜູ້ປະສານງານການເບິ່ງແຍງດູແລຂອງທ່ານ**



**ທ່ານໝໍຂອງທ່ານ**



**ຜູ້ຊ່ຽວຊານຂອງພວກເຮົາ**



**ຫຸ້ນສ່ວນຊຸມຊົນ**

# ຜົນປະໂຫຍດແຜນປະກັນ My Choice Wisconsin Medicare Dual Advantage Plan

ບໍ່ເສຍຄ່າເບ້ຍປະກັນ $0 | ບໍ່ຫັກຄ່າໃຊ້ຈ່າຍ $0

## ທ່ານຈະໄດ້ຮັບ:

**ພາກ A: ການເຂົ້າກວດຢູ່ໂຮງໝໍ ແລະ ຄ່າໃຊ້ຈ່າຍຕ່າງໆ**
ພວກເຮົາຄຸ້ມຄອງຄ່າໃຊ້ຈ່າຍໃຫ້, ຖ້າຫາກທ່ານຕ້ອງນອນໂຮງໝໍ. ເມື່ອທ່ານພ້ອມທີ່ຈະອອກໂຮງໝໍ, ການປະສານງານເບິ່ງແຍງດູແລຂອງພວກເຮົາຈະຊ່ວຍທ່ານໃນຂັ້ນຕອນຕໍ່ໄປຂອງທ່ານ.

**ພາກ B: ການເຂົ້າກວດກັບທ່ານໝໍ ແລະ ການກວດ**
ພວກເຮົາຄຸ້ມຄອງການກວດເປັນປະຈຳ ແລະ ການເຂົ້າກວດກັບທ່ານໝໍ. ຖ້າຫາກທ່ານໝໍຂອງທ່ານສັ່ງໃຫ້ກວດເຊັ່ນ: ສ່ອງໄຟຟ້າ, ພວກເຮົາຄຸ້ມຄອງເຊັ່ນກັນ. ພວກເຮົາຍັງສາມາດຊ່ວຍທ່ານຈັດຕາຕະລາງການນັດພົບໄດ້.

**ພາກ D: ການຄຸ້ມຄອງຢາຕາມໃບສັ່ງຢາຈາກແພດ**
ບໍ່ວ່າທ່ານຈະຕ້ອງການຢາທຸກມື້ ຫຼື ບາງຄັ້ງຄາວເທົ່ານັ້ນ, ທ່ານສາມາດເຂົ້າເຖິງຢາມີຍີ່ຫໍ້ ແລະ ຢາສາມັນຫຼາຍຊະນິດ.

*ໂປຣແກຣມ Medicare Dual Advantage ຈາກ My Choice Wisconsin ແມ່ນ HMO SNP (ແຜນການການຄວາມຕ້ອງການພິເສດ) ກັບສັນຍາຂອງ Medicare ແລະ ການເຊັນສັນຍາກັບ ການບໍລິການສຸຂະພາບຂອງພະແນກຂອງ Wisconsin (Wisconsin Department of Health Services) ສຳລັບໂປຣແກຣມ Medicaid. ການເຂົ້າຮ່ວມໃນ My Choice WI Medicare Dual Advantage ຂຶ້ນກັບການເຊັນສັນຍາໃໝ່. ນີ້ບໍ່ແມ່ນຄຳອະທິບາຍທີ່ຄົບຖ້ວນສຳລັບຜົນປະໂຫຍດ ແລະ ບໍລິການ. ເຂົ້າເບິ່ງພວກເຮົາອອນລາຍ ຫຼື ໂທ 800-963-0035 ແລະ ຂໍລົມກັບຜູ້ໃຫ້ຄຳແນະນຳ Medicare ເພື່ອໃຫ້ໄດ້ຂໍ້ມູນເພີ່ມເຕີມກ່ຽວກັບຂໍ້ສະຫຼຸບຜົນປະໂຫຍດໃນປີ 2024 ຂອງພວກເຮົາ.*

## ຜົນປະໂຫຍດເພີ່ມພິເສດ ສຳລັບຄວາມໝັ້ນຄົງ ແລະ ການປະຫຍັດ:

**ລາຍການສຳລັບຕາມຮ້າຍຂາຍ**
$155 ຕໍ່ເດືອນໂດຍມີການໝູນວຽນເພື່ອໃຊ້ຈ່າຍທີ່ສັ່ງຕາມແຄັດຕາລອກ ຫຼື ຕາມຮ້ອນຂາຍຍ່ອຍໃນເຄືອຂ່າຍສຳລັບສິນຄ້າຕ່າງໆເຊັ່ນ: ຢາຕາມຮ້າຍຂາຍ ແລະ ຂອງໃຊ້ສ່ວນຕົວ.

**ການປິ່ນປົວແຂ້ວ ແລະ ການຄຸ້ມຄອງການປິ່ນປົວແຂ້ວ**
$2,500 ຕໍ່ປີ ສຳລັບການກວດ, ການທຳຄວາມສະອາດ, ການສ່ອງໄຟຟ້າ, ການເຄືອບແຂ້ວ, ການໃສ້ແຂ້ວປອມ, ແລະອື່ນໆອີກ. ທ່ານສາມາດເຂົ້າພົບ ທັນຕະເພດທີ່ບໍ່ສັງກັດ Medicaid ໄດ້ ຖ້າທ່ານບໍ່ມີທັນຕະແພດສັງກັດ Medicaid ຢູ່ໄກ້ກັບທ່ານ.

**ການຄຸ້ມຄອງສາຍຕາ**
$150 ຕໍ່ ປີ ໃຫ້ກັບແວ່ນຕາ ແລະ ຄອນແທັກເລັນຊ໌.

**ອຸປະກອນໃຫ້ຄວາມປອດໄພພາຍໃນບ້ານ ແລະ ຫ້ອງນໍ້າ ແລະ ການດັດແກ້**
ຮັບຜົນປະໂຫຍດເຖິງ $300 ຕໍ່ປີ ສຳລັບສິນຄ້າເຊັ່ນ: ຮາວຈັບ, ຕັ່ງອາບນໍ້າ, ຝັກບົວແບບປົດອອກຖືໄດ້ ແລະ ອື່ນໆອີກ.  ນອກຈາກນັ້ນ, ຖ້າຫາກທ່ານກັງວົນກ່ຽວກັບການລົ້ມ ຫຼື ເຫດການສຸກເສີນທີ່ກ່ຽວຂ້ອງກັບສຸຂະພາບ, ແຜນການຈະສະໜອງປຸ່ມສຸກເສີນແກ່ທ່ານເພື່ອຄວາມປອດໄພຂອງທ່ານ.

**ການຊ່ວຍເຫຼືອກ່ຽວກັບບໍລິການ ແລະ ຄຳຖາມທາງການແພດ**
ຜູ້ປະສານງານດ້ານການເບິ່ງແຍງແລດູສຸຂະພາບ ສາມາດຊ່ວຍທ່ານເຂົ້າໃຈກ່ຽວກັບຜົນປະໂຫຍດ, ການຊອກຫາຜູ້ໃຫ້ບໍລິການ ແລະ ເຮັດການນັດພົບແພດ. ນອກນຈາກນັ້ນ, ທ່ານຍັງສາມາດເຂົ້າເຖິງສາຍດ່ວນພະຍາບານເບິ່ງແຍງດູແລໄດ້ ຕະຫຼອດ 24/7.

**ອາຫານພາຍຫຼັງເຂົ້າໂຮງໝໍ/ຢູ່ສະຖານ ພະຍາບານ**
ອາຫານ ສອງຄາບຕໍ່ມື້ ເຖິງ 28 ມື້.

# ຂ້ອຍມີສິດເຂົ້າຮ່ວມບໍ?

**ແມ່ນໃຜຈະສາມາດເຂົ້າຮ່ວມ Medicare Dual Advantage My Choice Wisconsin)** (HMO SNP)

- ທ່ານມີສິດສຳລັບ ຫຼື ຮັບຜົນປະໂຫຍດຈາກ Medicare (ພາກ A ແລະ B).
- ທ່ານມີສິດສຳລັບ ຫຼື ໄດ້ຮັບຄວາມຊ່ວຍເຫຼືອລັດຖະບານ Medicaid.
- ທ່ານດຳລົງຊີວິດຢູ່ພາຍໃນ ໜຶ່ງ ໃນ **32 ເຂດປົກຄອງ**ບ່ອນທີ່ My Choice Wisconsin ມີໂຄງການ Medicare Dual Advantage ໃຫ້.




*"ພວກເຮົາເພີດເພີນກັບຄວາມສະດວກສະບາຍ ກັບການສັ່ງສິນຄ້າຕາມຮ້ານຂາຍທີ່ສົ່ງເຖິງພວກເຮົາໂດຍກົງ. ມັນຊ່ວຍພວກເຮົາປະຢັດເງິນ ແລະ ເວລາ!"*

*- ທ່ານນາງ ເຄທີ່, ຄູ່ສົມລົດຂອງສະມາຊິກ*